# ໄປສູ່ຄວາມເປັນນ້ຳໜຶ່ງໃຈດຽວກັນ

ເພື່ອຈະໃຫ້ມີຄວາມເປັນນ້ຳໜຶ່ງໃຈດຽວໃໝ່ພຸ້ງເກີດຂຶ້ນມາທ່າມກາງມວນມະນຸດໃນທຸກລະດັບບໍ່ວ່າໃນບັນດາຄອບຄົວ,ກຸ່ມຊຸມຊົນ,ບ້ານເມືອງ ລະຫວ່າງບັນດາປະເທດ ແລະ ທະວີບຕ່າງໆແມ່ນຕ້ອງການໃຫ້ມີການຕັດສິນໃຈທີ່ ກ້າຫານ.

ເພາະຮູ້ດີວ່າມີໄພອັນຕະລາຍຫຼາຍຮູບແບບແລະຄວາມທຸກທໍລະມານທີ່ນຳຄວາມໜ່ວງໜັກມາໃຫ້ມະນຸດຊາດ ແລະ ໂລກພວກເຮົາຈຶ່ງບໍ່ຕ້ອງການທີ່ຈະຕົກຢູ່ໃນຄວາມຢ້ານກົວແລະຄວາມທໍ້ຖອຍ

ແຕ່ແລ້ວຄວາມໄວ້ເນື້ອວາງໃຈອັນລະອຽດອ່ອນຂອງມະນຸດມີຄວາມຜິດຫວັງຊູ່ເຊັ່ນມາຢູ່ຕະຫຼອດ.ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດທີ່ນັບວັນນັບໜັກໜ່ວງຂຶ້ນ ບາງທີກໍ່ມີຄວາມຊະລັບຊັບຊ້ອນເໜືອຂອບເຂດຂອງສັງຄົມ ຕ່າງໆ ແລະ ຄວາມບໍ່ສາມາດກະທຳສິ່ງໃດໄດ້ໃນເມື່ອເກີດບັນດາໄພທຳມະຊາດຊຶ່ງທັງໝົດບີບຮັດໜໍ່ອ່ອນເຍົາແຫ່ງ ຄວາມຫວັງ.

ເພື່ອສ້າງຮູບແບບໃໝ່ຂອງຄວາມສາມັກຄີເປັນນ້ຳໜຶ່ງໃຈດຽວບໍ່ແມ່ນເຖິງເວລາແລ້ວບໍ ທີ່ຈະຕ້ອງອອກກຳລັງແຮງຂຶ້ນອີກເພື່ອຄົ້ນພົບພວກບໍ່ເກີດຕ່າງໆແຫ່ງຄວາມຫວັງ?

ບໍ່ມີມະນຸດຄົນໃດ ບໍ່ມີສັງຄົມໃດທີ່ຈະມີຊີວິດຢູ່ໄດ້ໂດຍບໍ່ມີຄວາມຫວັງໄວ້ໃຈ, ເມື່ອໃດເກີດມີການທໍລະຍົດຕໍ່ຄວາມຫວັງໄວ້ໃຈເກີດຂຶ້ນ ຈະເກີດມີຮອຍແຜຢູ່ເລິກໆ.

ຄວາມໄວ້ວາງໃຈ ບໍ່ແມ່ນຄວາມຕົວະຫຼອກຄົນໂງ່ ບໍ່ແມ່ນຄວາມເວົ້າງ່າຍ.ຄວາມໄວ້ວາງໃຈເປັນຜົນເກີດຂອງການເລືອກເຟັ້ນ ເປັນຜົນເກີດຂອງສູ້ຊົນໃນຈິດໃຈ. ແຕ່ລະວັນໆພວກເຮົາຖືກຮຽກເອີ້ນໃຫ້ໜີອອກຈາກຄວາມຫ່ວງກັງວົນເຂົ້າສູ່ຄວາມໄວ້ວາງໃຈ.

***ຄວາມໄວ້ວາງໃຈລະວຫວ່າງພວກມະນຸດ***

ເປີດໄຂສາຍທາງຄວາມໄວ້ວາງໃຈເປັນສິ່ງທີ່ຕ້ອງກະທຳໂດຍຮີບດ່ວນ: ເຖິງແມ່ນວ່າການຕິດຕໍ່ພົວພັນກັນໄດ້ກາຍເປັນສິ່ງສະດວກງ່າຍຂຶ້ນໆກໍ່ຕາມແຕ່ສັງຄົມມະນຸດເຮົາຍັງປິດອັດຕັດຂາດຈາກກັນຢູ່.

ມີກຳແພງກີດກັ້ນບໍ່ແມ່ນແຕ່ລະຫວ່າງປະຊາຊາດແລະທະວີບຕ່າງໆແຕ່ຢູ່ໃກ້ໆຕົວເຮົານີ້ແລະເຖິງກັບແມ່ນໃນຫົວໃຈຂອງພວກເຮົາ. ໃຫ້ຄິດໃສ່ຄວາມຄິດອັກຄະຕິວະຫ່ວາງຊາດຕ່າງໆ. ໃຫ້ຄິດເຖິງຄົນອົບພະຍົບທີ່ຢູ່ໃກ້ໆຕົວແຕ່ແລ້ວສ່ວນໃຫ່ຍຍັງຢູ່ໄກໆ. ບັນດາສາສະໜາຍັງບໍ່ຮູ້ຈັກກັນ ແລະ ຊາວກຣິສຕະຊົນເອງກໍ່ຍັງແບ່ງແຍກກັນອອກເປັນຈຳນວນມະຫາສານຂອງລັດທີ່ເຊື່ອຖື.

ສັນຕິພາບໂລກລິເລີ່ມກໍ່ຕົວຂຶ້ນໃນດວງໃຈຂອງພວກເຮົາ.

ເພື່ອຈະໃຫ້ເກີດຄວາມສາມັກຄີຂື້ນເຮົາຕ້ອງການໄປເຖິງຄົນອື່ນໆ. ບາງທີໄປດ້ວຍມືເປົ່າ ໄປຟັງພະຍາຍາມເຂົ້າໃຈຮັບຮູ້ຜູ້ຊາຍຫຼືຜູ້ຍິງທີ່ບໍ່ຄິດຄືກັນກັບເຮົາ...ແລະ ຈາກນັ້ນສະພາບການທີ່ອັດກຸນແຈຕາຍໄວ້ກໍ່ປາກົດວ່າໄດ້ຮັບການປ່ຽນແປງໄປ.

ໃຫ້ພວກເຮົາເອົາຈິດໃສໃຈນຳພວກຄົນທີ່ມີຄວາມບົກຜ່ອງຫຼາຍກ່ວາໝູ່ ນຳພວກຄົນທີ່ບໍ່ມີວຽກເຮັດງານທຳ...

ການເອົາຈິດໃສ່ໃຈເຖິງພວກຄົນທຸກຈົນກວ່າໝູ່ອາດຈະສະແດງຕົວອອກມາໃນການລົງມືທຳງານໃນຮູບໃດໜຶ່ງໃຫ້ແກ່ສັງຄົມ. ເລີກລົງໄປກ່ວານັ້ນອີກຍັງມີການເປີດຕົວກ້ວາງແກ່ຄົນອື່ນໆໝົດທຸກຄົນ: ຕໍ່ພວກຄົນທີ່ຢູ່ໃກ້ຕົວເຮົາທີ່ເບິ່ງໄປມາແລ້ວເປັນພວກຄົນທີ່ຕ້ອງການພວກເຮົາ.

ເມື່ອພົບກັບຄວາມທຸກຈົນ ຄົນບາງຈຳພວກຈະລົງທ້າຍດ້ວຍຄວາມວຸ້ນວາຍໃຈຫຼືແມ່ນແຕ່ຖືກຫລອກລວງໃຊ້ຄວາມຮຸນແຮງແບບບໍ່ມີຈຸດໝາຍປາຍທາງເລີຍ. ຄວາມທາລຸນຮຸນແຮງບໍ່ແມ່ນທາງແກ້ໃຂສັງຄົມ.ແຕ່ພວກເຮົາຕ້ອງການຈະຟັງພວກຄົນໜຸ່ມສາວທີ່ສະແດງຄວາມບໍ່ພໍໃຈ ເພື່ອຈະຈັບສາເຫດໄດ້ວ່າເປັນຫຍັງຈຶ່ງບໍ່ພໍໃຈ.

ແຮງກະຕຸ້ນໃຫ້ມີຄວາມສາມັກຄີໃໝ່ ມີຄວາມຕັ້ງໃຈເລິກເຊິ່ງ ເປັນແນວລ້ຽງຄວາມຕ້ອງການແບ່ງປັນກັບຄົນອື່ນ ເປັນຕົ້ນເຫດໜຶ່ງໃນຫຼາຍຕົ້ນເຫດ. ຄວາມຮຽກຮ້ອງຕ້ອງການນີ້ ອາດສາມາດນຳບັນດາຄົນທີ່ມີຄວາມເຊື່ອຖືທີ່ແຕກຕ່າງກັນ ຫຼື ແມ່ນແຕ່ພວກຄົນທີ່ມີຄວາມເຊື່ອ ແລະ ບໍ່ມີຄວາມເຊື່ອ ມາເຂົ້າຫາກັນໄດ້.

## ໄວ້ໃຈໃນພຣະເຈົ້າ

ຄວາມສາມັກຄີລະຫວ່າງພວກມະນຸດອາດຈະມີພື້ນຖານແໜ້ນໜາໃນພຣະເຈົ້າ ແຕ່ແລ້ວຄວາມໄວ້ໃຈພຣະເຈົ້າມັກຈະມີຄຳຖາມຂື້ນມາ. ພວກຄົນທີ່ມີຄວາມເຊື່ອຫຼາຍຄົນ ໄດ້ມີປະສົບການທາງລົບໃນທີ່ທຳງານ ຫຼື ໃນທີ່ສຶກສາຮ່ຳຮຽນຂອງພວກເຂົາ ບາງທີໃນຄອບຄົວຂອງພວກເຂົາ.

ມີຄົນຈຳນວນຫຼາຍ ທີ່ບໍ່ສາມາດຈະເຊື່ອພຣະເຈົ້າ ຜູ້ຮັກແພງຕົນເປັນສ່ວນຕົວ. ຍັງມີອີກຫຼາຍຄົນດ້ວຍຄວາມມີຫົວໃຈຊື່, ຖາມຄຳຖາມນີ້ວ່າ: ຂ້ອຍຈະຮູ້ຈັກໄດ້ແນວໃດ ວ່າຂ້ອຍມີຄວາມເຊື່ອ?

ໃນປັດຈຸບັນນີ້ ຄວາມເຊື່ອປາກົດໃນການສ່ຽງ ເປັນການສ່ຽງການໄວ້ວາງໃຈ. ກ່ອນອື່ນໃດໝົດຄວາມເຊື່ອບໍ່ໄດ້ໝາຍຄວາມວ່າ ຮັບຄວາມຈິງ ຄວາມເຊື່ອເປັນການຍອມຮັບເຂົ້າໄປສະນິດກັບພຣະເຈົ້າ. ເປັນການຮຽກຮ້ອງພວກເຮົາໃຫ້ຫັນໜ້າໄປທາງຄວາມຮຸ່ງສະຫວ່າງຂອງພຣະເຈົ້າ.

ຫ່າງຈາກການຈະນຳພາໄປເປັນຄ່ອຍທາດ ຫຼື ດັບມອດຄວາມເບັ່ງບານສ່ວນຕົວຂອງເຮົາ ຄວາມເຊື່ອໃນ ພຣະເຈົ້າທຳໃຫ້ພວກເຮົາມີເສລີພາບ, ມີເສລີຈາກຄວາມຢ້ານກົວ, ມີເສລີພາບທີ່ຈະໃຫ້ການຮັບໃຊ້ພວກທີ່ພຣະເຈົ້າ ມອບຝາກໄວ້ກັບເຮົາ.

ຄວາມໄວ້ວາງໃຈໃນພຣະເຈົ້າຫຍິ່ງເຕີບໂຕໃຫຍ່ຂື້ນ ຫົວໃຈຂອງພວກເຮົາຫຍິ່ງຂະຫຍາຍເປີດກ້ວາງອອກ ຮັບເອົາທຸກສິ່ງທຸກຢ່າງອັນທີ່ເປັນຂອງມະນຸດ ໃນທຸກຫົນແຫ່ງທົ່ວໂລກ ໃນທຸກໆວັດທະນະທຳ. ຫົວໃຈຂອງພວກເຮົາຍັງສາມາດຮັບຕ້ອນວິທະຍາສາດ ແລະ ວິຊາເທັກນິກ ທີ່ກະທຳໃຫ້ຄວາມທຸກທໍລະມານ ແລະ ເບີກບານ ໃຫ້ສັງຄົມກ້າວໜ້າໄປ.

ດັ່ງດຽວການກັບດວງຕາເວັນ ພຣະເຈົ້າຊົງແສງເຈີດຈ້າ ຫຼາຍເກີນໄປ ເພື່ອເຮົາຈະຈ້ອງຕາເບິ່ງໄດ້. ແຕ່ແລ້ວພຣະເຢຊູເຈົ້າຈະປະທານໃຫ້ແສງແຈ້ງສະຫວ່າງ ຂອງພຣະເຈົ້າສ່ອງແສ່ງຜ່ານພຣະອົງອອກມາ. ພະຄຳພີທັງໝົດນຳພາພວກເຮົາໄປສູ່ຄວາມໄວ້ວາງໃຈນີ້: ພຣະເຈົ້າອົງແສນສູງສົ່ງ ເຂົ້າມາໃນຄວາມເປັນມະນຸດຂອງເຮົາ ແລະ ເວົ້າລົມນຳເຮົາໃນພາສາທີ່ພວກເຮົາເຂົ້າໃຈໄດ້.

ແມ່ນຫຍັງເປັນສິ່ງແປກ ຕ່າງຄວາມເຊື່ອກຣິສຕັງ? ແມ່ນພຣະອົງພຣະເຢຊູເຈົ້າ ແລະ ຄວາມຜູກພັນທີ່ມີຊີວິດກັບພຣະອົງ. ພວກເຮົາຈະເກັບກຳຄວາມຈິງນີ້ບໍ່ມີຍາມສິ້ນສຸດໄດ້ຈັກເທື່ອ.

## ພຣະອົງກຣິສໂຕເຈົ້າ ແຫ່ງຄວາມສະນິດສຳພັນ

ພວກເຮົາທຸກໆຄົນ ເປັນຄົນຊອກສະແຫວງບຸນ ເປັນຜູ້ຊອກຫາຄວາມຈິງ (ແລະຂອງຈິງ). ເຊື່ອໃນພຣະອົງພຣະກຣິສໂຕເຈົ້າ ບໍ່ໄດ້ໝາຍຄວາມວ່າເຮົາເປັນເຈົ້າຂອງຄວາມຈິງ,ບໍ່ແມ່ນຈັກໜ້ອຍ. ແຕ່ປ່ອຍວາງນຳ ພຣະອົງຜູ້ເປັນຄວາມຈິງ ກັບຕົວເຮົາໄວ້ ໝຸ້ງໜ້າໄປສູ່ຄວາມຈິງອັນສົມບູນ.

ສິ່ງທີ່ເປັນຢູ່ ແລະ ຍັງຈະເປັນຢູ່ຢ່າງສົມຢ່າງສົມບູນ ແລະ ຢ່າງແປກໃຈກໍ່ຄືພຣະເຢຊູເຈົ້າໄດ້ສົ່ງຢື້ນແສງສະຫວ່າງຂອງພຣະເຈົ້າ ອອກມາຜ່ານຊີວິດລຽບງ່າຍ. ຊີວິດທີ່ພຣະເຈົ້າໄດ້ປະທານໃຫ້ພຣະອົງຍາມເປັນມະນຸດ. ພຣະເຈົ້າຣືຟື້ນຄວາມຫວັງໃນໃຈໃຫ້ໝູ່ມະນຸດ ພະອົງປະທານໃຫ້ພວກເຮົາສາມາດເຊື່ອໃນຊາດມະນຸດ. ນັບແຕ່ວັນນັ້ນມາພຣະອົງ ພວກເຮົາບໍ່ສາມາດສ້າງຄວາມໄວ້ໃຈ ບໍ່ວ່ານຳໂລກ ຫຼື ຕົວເຮົາເອງ.

ພຣະອົງຊົງຮັບຄວາມຕາຍອັນທາລຸນຮຸນແຮງ ໂດຍບໍ່ໄດ້ໃຊ້ຄວາມທາລຸນຮຸນແຮງຕອບແທນ ດັ່ງນີ້ພຣະເຢຊູເຈົ້າຈຶ່ງໄດ້ນຳເອົາຄວາມຮັກຂອງພຣະເຈົ້າ ໄປໃນບ່ອນທີ່ມີແຕ່ຄວາມຄຽດຊັງ. ບົນໄມ້ກາງເຂນພຣະອົງບໍ່ໄດ້ຍອມຮັບໂຊກຊະຕາກຳ ແລະ ຄວາມເມີນເສີຍ.ພຣະອົງໄດ້ຮັກໄປຈົນສຸດ ແລະ ເຖິງແມ່ນວ່າຄວາມທຸກທໍລະມານເບິ່ງໄປແລ້ວບໍ່ມີກົກບໍ່ມີປາຍ ແລະ ເຂົ້າໃຈບໍ່ໄດ້. ພຣະອົງຍັງໄວ້ວາງໃຈວ່າ ພຣະເຈົ້າໃຫຍ່ກ່ວາຄວາມຊົ່ວຮ້າຍ ແລະ ຄວາມຕາຍຈະບໍ່ໄດ້ເປັນນາຍໄປຈົນສຸດດອກ. ໄປໃນທາງກົງກັນຂ້າມ ຄວາມທໍລະມານຂອງພຣະອົງບົນໄມ້ກາງເຂນໄດ້ກາຍ ມາເປັນສັນຍາລັກ ແຫ່ງຄວາມຮັກທີ່ບໍ່ມີຂອບເຂດ.

ແລ້ວພຣະເຈົ້າໄດ້ຍົກພຣະອົງຂຶ້ນມາແຕ່ພວກໝູ່ຜູ້ຕາຍ. ພຣະກຣສີໂຕເຈົ້າບໍ່ແມ່ນເປັນຄົນຂອງອະດີດ ພຣະອົງຊົງຢູ່ນີ້ ສຳລັບພວກເຮົາໃນແຕ່ລະວັນໃໝ່. ພຣະອົງຊົງຍື່ນພຣະຈິດເຈົ້າໃຫ້ແກ່ພວກເຮົາ ໃຫ້ພວກເຮົາສາມາດມີຊີວິດຂອງພຣະເຈົ້າເອງ.

ສູນກາງຄວາມເຊື່ອຂອງພວກເຮົາແມ່ນພຣະກຣິສໂຕເຈົ້າ ກັບຄືນຊີບ ພຣະອົງສະຖິດຢູ່ກາງພວກເຮົານີ້ ພຣະອົງມີສານຜູກພັນແຫ່ງຄວາມຮັກກັບພວກເຮົາແຕ່ລະຄົນ. ທັນໜ້າມືນຕາເບິ່ງພຣະອົງ ປຸກຄວາມອັດສະຈັນໃຈ ແລະ ຄວາມເຂົ້າໃຈໃນຊີວິດເຮົາເລິກລົງ.

ເມື່ອພວກເຮົາຈ້ອງມອງໄປທາງຄວາມຮຸ່ງສະຫວ່າງຂອງພຣະອົງໃນການພາວະນາ ຄວາມສະຫວ່າງນີ້ຈະຄ່ອຍໆ ເລີ່ມຕົ້ນຮຸ່ງແຈ້ງຂຶ້ນໃນຕົວເຮົາ. ຄວາມເລິກລັບໃນພຣະກຣິສໂຕເຈົ້າ ໄດ້ກາຍມາເປັນຄວາມເລິກລັບໃນຊີວິດເຮົາເອງ. ຄວາມຂັດແຍ່ງທາງໃນ ແລະ ຄວາມຢ້ານກົວຂອງພວກເຮົາ ອາດຈະບໍ່ຖືກລົບລ້າງໄປ. ແຕ່ຍ້ອນອາໄສພຣະຈິດເຈົ້າ ພຣະກຣິສໂຕເຈົ້າເຂົ້າໄປໃນຄວາມກັງວົນກ່ຽວກັບຕົວເຮົາຢ່າງສົມບູນ ເພື່ອໃຫ້ແສງແຈ້ງສະຫວ່າງ ສາດແສງເຂົ້າໄປໃນບ່ອນມືດໃນຕົວເຮົາ. ການພາວະນາ ນຳພາພວກເຮົາໄປຫາພຣະເຈົ້າ ແລະ ໄປຫາໂລກພ້ອມໆກັນ.

ດັ່ງດຽວກັບ ມາຣີອາ ມັກດາເລນາ ໃນເຊົ້າວັນປາສກາ ໄດ້ເຫັນພຣະເຢຊູເຈົ້າຊົງຊີວິດ ພວກເຮົາກໍ່ໄດ້ຖືກແບ່ງປັນຂ່າວດີນີ້ກັບຄົນອື່ນ. ຄວາມເຄັ່ງຄັດໃນທຸກຮູບແບບ ດັ່ງນີ້ຈຶ່ງສາມາດປ່ອຍຄວາມວາງໃຈອັນຖ່ອມນ້ອຍດ້ວຍຄວາມເຊື່ອ ສາດແສງຮຸ່ງແຈ້ງເຂົ້າໄປໃນດວງໃຈຂອງມະນຸດ.

## ພະຍາຍາມເປັນເກືອຂອງແຜ່ນດິນ

ພຣະກຣິສໂຕເຈົ້າແຫ່ງຄວາມສະນິດສຳພັນ ບໍ່ໄດ້ມາແຍກກຣິສຕະຊົນໄປຈາກຄົນອື່ນ ແລ້ວປະກອບຕົນເປັນກຸ່ມຊົນໂດດດ່ຽວ: ພຣະອົງສົ່ງພວກເຂົາໄປຮັບໃຊ້ຊາດມະມະນຸດໃນທຳນອງເປັນເຊື້ອແປ້ງ ແຫ່ງຄວາມຫວັງໃນໃຈ ແລະ ສັນຕິສຸກ.ການທີ່ກຣິສຕະຊົນເປັນກຸ່ມເປັນກ້ອນກັນບໍ່ໄດ້ແມ່ນເປົ້າໝາຍສຸດທ້າຍ ແຕ່ເປັນສັນຍາລັກເຄື່ອງໝາຍທ່າມກາງມວນມະນຸດ:" ພວກເຈົ້າເປັນເກືອຂອງແຜ່ນດິນ".

ອາໄສໄມ້ກາງເຂນ ແລະ ການກັບຄືນຊີບຂອງພຣະອົງ ພຣະກຣິສໂຕເຈົ້າ ໄດ້ສະຖາປະນາ ຄວາມສາມັກຄີລະຫວ່າງມວນມະນຸດ. ນອກຈາກນີ້ການແຕກແຍກລະຫວ່າງມວນມະນຸດ ອອກເປັນກຸ່ມ7 ທີ່ຕັດແຍກຕໍ່ສູ້ກັນ ໄດ້ມີໄຊຊະນະມາກວມຢູ່ເໜືອແລ້ວ.ໃນພຣະອົງໝົດທຸກ 7 ຄົນໄດ້ເຂົ້າມາເປັນຄອບຄົວໜຶ່ງຄອບຄົວດຽວກັນ. ເຂົາຄືນດີກັບພຣະເຈົ້າ ຈະນຳມາການເຂົ້າຄືນດີກັບພວກມະນຸດ.

ແຕ່ຖ້າຫາກເກືອດອງເສຍລົດຊາດເຄັມໄປ... ກໍ່ຕ້ອງມີການຮັບຮູ້ວ່າແມ່ນພວກເຮົາກຣິສຕະຊົນນີ້ເອງເປັນຜູ້ປິດບັງຂ່າວສານຂອງພຣະກຣິສໂຕເຈົ້າ.ເປັນພິເສດແມ່ນ: ພວກເຮົາຈະສ່ອງລັດສະໝີແຫ່ງສັນຕິພາບໄດ້ຢ່າງໃດ ຖ້າພວກເຮົາຍັງແຕກແຍກກັນຢູ່?

ພວກເຮົາຢູ່ໃນຂັ້ນຕອນປະຫວັດສາດ ທີ່ຕ້ອງໃຫ້ຊີວິດຈິດໃຈແກ່ຂ່າວສານ ແຫ່ງຄວາມຮັກ ແລະ ສັນຕິສຸກ. ພວກເຮົາຈະກະທຳທຸກຢ່າງທີ່ສາມາດກະທຳ ຫຼື ບໍ່ ເພື່ອວ່າເມື່ອປົດປ່ອຍອອກຈາກຄວາມບໍ່ເຂົ້າໃຈກັນແລ້ວຂ່າວດີແຫ່ງຄວາມຮັກ ແລະ ສັນຕິສະສ່ອງແສງອອກໄປໃນຮູບແບບລຽບງ່າຍ ທີ່ເຄີຍມີມາແຕ່ດຶກດຳບັນ?

ພວກເຮົາຈະມີຄວາມສາມາດບໍ່ໜໍ ທີ່ຈະເດີນທາງໄປ ໂດຍບໍ່ບັງຄັບສິ່ງໃດເລີຍ ຄຽງຂ້າງກັບພວກທີ່ບໍ່ໄດ້ແບ່ງປັນຄວາມເຊື່ອອັນດຽວກັບພວກເຮົາ ແຕ່ກຳລັງຊອກສະແຫວງຫາຄວາມຈິງດ້ວຍໝົດຈິດໝົດໃຈຂອງຕົນ?

ໃນຄວາມພະຍາຍາມຂອງພວກເຮົາທີ່ຈະສ້າງຮູບແບບໃໝ່ໃນຄວາມສາມັກຄີຂຶ້ນມາ ແລະ ໄຂທາງໃຫ້ແກ່ຄວາມໄວ້ວາງໃຈກັນນີ້ ຈະມີດັ່ງທີ່ເຄີຍມີມາຢູ່ຕະຫຼອດ ຈະມີການທົດລອງ. ລາງເທື່ອປາກົດວ່າການທົດລອງນີ້ລົ້ນກາຍພວກເຮົາໄປ ຈັ່ງຊັ້ນພວກເຮົາຄວນຈະເຮັດແນວໃດ? ບໍ່ແມ່ນຄຳຕອບສ່ວນຕົວຂອງເຮົາບໍວ່າ ໃນເມື່ອພົບການທົດລອງສ່ວນຕົວ ແລະ ການທົດລອງທີ່ຄົນອື່ນຮັບແບກ ຢູ່ວ່າ: ໃຫ້ຮັກຫຼາຍຂຶ້ນກວ່າອີກ?

(ບຣາເດີ້ ອາລອຍສ)

Translated from English text into Lao by:

Bp Jean Khamse Vithavong

Vientiane Diocese, PDR Laos